ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 48 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 25 ຕຸລາ 2017

ສຳນັກງານ ຄຄຂ
ລາລຶ
ເລກທີ......1924
ວັນທີ 27 OCT 2017
ໂທລະສັບ 021 2177

## ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈຳອາທິດ ທີ 09-13/10/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ. ພະນັກງານມີຄວາມອຸ່ນອຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ. ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອອນຄ່າລົງ 0,99% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຕົວເລກດັດຊະນີລາຄາຜູ້ບໍລິໂພກຂອງ ສະຫະລັດອາເມລິກາ ເພີ່ມຂຶ້ນ 2,20% ຂອງເດືອນ 09/2017 ຈາກເພີ່ມຂຶ້ນ 1,90% ໃນປີຜ່ານມາ; ພ້ອມກັນນັ້ນ, ຕົວເລກຍອດບັນຊີຊຳລະປົກກະຕິຂອງສະຫະພາບເອີຣົບ ເພີ່ມຂຶ້ນເປັນ 20,00% ຂອງເດືອນ 08/2017 ຈາກ 19,30% ຕໍ່ເອີໂຣ ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ<br>02-06/10/2017 | ອາທິດນີ້<br>09-13/10/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1710 | 1,1827 | -0,99% |
| ເຢນ/ໂດລາ | 112,84 | 112,10 | 0,66% |
| ບາດ/ໂດລາ | 33,42 | 33,070 | 1,06% |
| ເປໂຊ/ໂດລາ | 51,09 | 51,41 | -0,63% |
| ຣູເປັຍ/ໂດລາ | 13.485 | 13.496 | -0,08% |
| ໂດລາສິງກະໂປ/ໂດລາ | 1,3655 | 1,3545 | 0,81% |
| ຢວນ/ໂດລາ | 6,6533 | 6,5856 | 1,03% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 0,58% ຈາກ 51,68 ໂດລາ/ບາເຣວ ມາເປັນ 51,38 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນອັດຊັງຂອງ ສະຫະລັດອາເມລິກາ ເພີ່ມຂຶ້ນ 2,49 ລ້ານບາເຣວ ຂອງອາທິດທີ 06/10/2017 ຈາກເພີ່ມຂຶ້ນ 1,64 ລ້ານບາເຣວ;

- ລາຄາຄຳ ເພີ່ມຂຶ້ນ 1.95% ຈາກ 1.269.05 ໂດລາ ອອນ ມາເປັນ 1.293.82 ໂດລາ ອອນ ເນື່ອງຈາກກອງທຶນ SPDR ເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳເພີ່ມຂຶ້ນ ເພື່ອໄຊ້ຮອງຮັບຄວາມສ່ຽງຈາກຄວາມຜັນຜວນຂອງຄ່າເງິນ, ເຮັດໃຫ້ປະລິມານຄຳທີ່ກອງທຶນ SPDR ຖືຄອງ ເພີ່ມຂຶ້ນ 4.43 ໂຕນ ເປັນ 858.45 ໂຕນ ໃນວັນທີ 09/10/2017 ຈາກ 854.02 ໂຕນ ໃນວັນທີ 06/10/2017.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາ ແຂງຄ່າຂຶ້ນ 0.24% ແຕ່ອ່ອນຄ່າລົງ 0.25% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 0.47% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 7.63% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 06-09/10/2017 | | | ອາທິດນີ້ 10-13/10/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8,384.77 | 8,402.96 | 8,395.06 | 8,365.91 | 8,389.57 | 8,377.36 | -0.23% | -0.16% | -0.24% | -0.56% | -0.42% | -0.47% |
| ບາດ | 252.82 | 254.13 | 253.33 | 253.05 | 254.58 | 253.95 | +0.09% | +0.22% | -0.25% | -7.69% | -7.65% | -7.63% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0.13% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 17.96%;
- ປະລິມານເງິນ M2 ເພີ່ມຂຶ້ນ 0.10% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12.34%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (06-12/10/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 1.66 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 20.70 ລ້ານໂດລາ ແລະ ຂາຍໂດລາໄດ້ 19.04 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 299.46 ລ້ານບາດ (ໃນນີ້ ຊື້ບາດໄດ້ 138.90 ລ້ານບາດ ແລະ ຂາຍບາດໄດ້ 438.36 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາຫຼຸດລົງ 39.80% ແລະ ເງິນບາດຫຼຸດລົງ 19.53%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 9.25 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 67.50 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 6.70 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 66.41 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ເງິນໂດລາ ຈຳນວນ 0.05 ລ້ານໂດລາສະຫະລັດ ແຕ່ເງິນບາດບໍ່ມີການເຄື່ອນໄຫວ.

---

1 % ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 29/09-05/10/2017 | | ອາທິດນີ້ 06-12/10/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | 33.08 | 275.10 | 20.70 | 138.90 | -37.42% | -49.51% |
| - ທ.ຄທຸລະກິດລັດ | 16.81 | 184.41 | 6.50 | 93.27 | -61.33% | -49.42% |
| - ທ.ຄທຸລະກິດອື່ນໆ | 16.27 | 90.69 | 14.20 | 45.63 | -12.72% | -49.69% |
| 2. ການຂາຍເງິນຕາຕ່າງປະເທດ | 32.93 | 442.24 | 19.04 | 438.36 | -42.18% | -0.88% |
| - ທ.ຄທຸລະກິດລັດ | 21.31 | 106.35 | 10.34 | 148.11 | -51.48% | 39.27% |
| - ທ.ຄທຸລະກິດອື່ນໆ | 11.62 | 335.89 | 8.70 | 290.25 | -25.13% | -13.59% |
| ຊື້-ຂາຍສຸດທິ ທທກ | 0.15 | -167.14 | 1.66 | -299.46 | 1006.67% | 79.17% |
| - ຜົດດ່ຽງ ຊື້-ຂາຍ | 0.45% | -60.76% | 8.02% | -215.59% | 1682.22% | 254.82% |
| - ມູນຄ່າການຊື້-ຂາຍ | 66.01 | 717.34 | 39.74 | 577.26 | -39.80% | -19.53% |
| 3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ | -9.32 | -50.70 | -9.25 | -67.50 | | |
| - ທຫລ ຊື້ຈາກ ທທກ | 0.00 | 40.00 | 0.00 | 0.00 | | |
| - ທຫລ ຂາຍໃຫ້ ທທກ | 9.32 | 90.70 | 9.25 | 67.50 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 1.30 | 50.99 | 6.70 | 66.41 | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | 0.20 | 0.00 | 0.05 | 0.00 | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0.51 | 0.00 | 0.05 | 0.00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0.31 | 0.00 | 0.00 | 0.00 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 10 2017 ຄາດວ່າຈະຢູ່ໃນລະດັບ 0.61% ເພີ່ມຂຶ້ນຈາກ 0.32% ໃນເດືອນ 09/2017.

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດ ໃນອາທິດນີ້ເພີ່ມຂຶ້ນ 231.7% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 52.73 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 118.5% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 78.32 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 424 ສະບັບ ທຽບໃສ່ອາທິດຜ່ານມາຫຼຸດລົງ 421 ສະບັບ ເທົ່າກັບ 49.82% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 194.09 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 191.34 ຕື້ກີບ ເທົ່າກັບ 49.64% ເມື່ອທຽບໃສ່ອາທິດຜ່ານມາ:

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (09-13/10/2017) ມີທັງໝົດ 2.653 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 2.594 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດ ນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 280.81 ຕື້ກີບ ຈາກ 761.17 ຕື້ກີບ ມາເປັນ 480.36 ຕື້ກີບ ເທົ່າກັບ 36.89%:

- [illegible]: ມີການເຄື່ອນໄຫວຈຳນວນ 59 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ [illegible] 38.99 ຕື້ກີບ ຈາກ 1.90 ຕື້ກີບ ມາເປັນ 40.89 ຕື້ກີບ ເທົ່າກັບ 2.052.10%.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1 059.87 ຈຸດ ເພີ່ມຂຶ້ນ 3.71% ເມື່ອທຽບໃສ່ອາທິດຜ່ານມາ. ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 279.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 653.78 ລ້ານກີບ ຫຼຸດລົງ 7.32% ທຽບໃສ່ອາທິດຜ່ານມາ. ໃນອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 57.94% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 02-06/10/2017 | ດັດຊະນີອາທິດທີ 09-13/10/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.021.91 | 1.059.87 | 3.71 | |

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX) (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 16.600 | 88.720.000 | 5.345 | 14.200 | 76.955.000 | 5.419 | - 14.46 | - 13.26 | 74.79 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 59.600 | 304.510.000 | 5.109 | 59.600 | 309.345.000 | 5.190 | - | 1.59 | 81.12 |
| ບໍລິສັດລາວເວີນ ມະຫາຊົນ | 2.100 | 15.540.000 | 7.400 | - | - | 7.400 | -100.00 | - 100.00 | - |
| ບໍລິສັດປີໂຕລ້ຽມເທຣດ ດິ້ງລາວ ມະຫາຊົນ | 4.300 | 8.235.000 | 1.950 | 100 | 195.000 | 1.950 | - 97.67 | - 97.63 | - |
| ບໍລິສັດສູວັນນີໂຮມເຊັນເຕີ ມະຫາຊົນ | - | - | 2.950 | - | - | 2.950 | - | - | - |
| ບໍລິສັດພູສີກໍ່ສ້າງ ມະຫາຊົນ | - | - | - | 205.600 | 267.285.000 | 1.300 | - | - | - |
| ທັງໝົດ | 82.600 | 417.005.000 | 5.048 | 279.500 | 653.780.000 | 5.230 | - 10.53 | - 7.32 | |

3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ສຳມະນາຕ່າງໆ: ❶ ກອງປະຊຸມສ່ອງແສງສາຍພັກ-ສາຍລັດ ປະຈຳເດືອນ ກັນຍາ 2017 ທີ່ (ທຫລ); ❷ ກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ຄະນະລັດຖະບານ ທີ່ (ຫສນຍ); ❸ ກອງປະຊຸມປຶກສາຫາລືແລກປ່ຽນບົດຮຽນກ່ຽວກັບວຽກງານຕະຫຼາດທຶນລະຫວ່າງ ສຳນັກງານ ຄຄຊ ແລະ ຜູ້ທີ່ມີສ່ວນຮ່ວມໃນຕະຫຼາດທຶນໃນວັນທີ 13 ຕຸລາ 2017 ທີ່ (ຕະຫຼາດຫຼັກຊັບລາວ) ແລະ

❺ ກອງປະຊຸມເຜີຍແຜ່ວຽກງານກ່ຽວກັບຫຼັກສູດໃນຫົວຂໍ້ "ຄວາມເຂົ້າໃຈພື້ນຖານກ່ຽວກັບການລົງທຶນໃນຮຸ້ນ" ໃນລະຫວ່າງ ວັນທີ 11-13 ຕຸລາ 2017 ທີ່ (ຫລຊ ແລະ ສູນການສະຫະພັນແມ່ຍິງລາວ).

- ທ່ານຮອງຜູ້ອຳນວຍການ ທຫລ ໄດ້ເຂົ້າຮ່ວມພິທີປິດສົກຮຽນ 2016-2017 ແລະ ພິທີສະເຫຼີມສະຫຼອງວັນຄູແຫ່ງຊາດ ປະຈຳປີ 2017 ທີ່ (ສທຄ);

- ທ່ານຮອງຜູ້ອຳນວຍການ ທຫລ ພ້ອມດ້ວຍຄະນະ ສຳເລັດການເດີນທາງໄປເຂົ້າຮ່ວມກອງປະຊຸມປະຈຳປີຂອງ WB IMF ທີ່ ປະເທດ ສະຫະລັດອາເມລິກາ ໃນລະຫວ່າງວັນທີ 10-17 ຕຸລາ 2017.

III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມຕ່າງໆ: ❶ ກອງປະຊຸມ ສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ທີ່ (ຫໍປະຊຸມແຫ່ງຊາດ); ❷ ກອງປະຊຸມເຜີຍແຜ່ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານການຕ້ານສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ (ທຫລ); ❸ ກອງປະຊຸມຄະນະສະເພາະກິດຂອງລັດຖະບານ ໃນການແກ້ໄຂບັນຫາຂອງບໍລິສັດພີເອັສ ສົ່ງເສີມກະສິກຳ ແລະ ອຸດສາຫະກຳຄົບວົງຈອນ ຂາອອກ-ຂາເຂົ້າ ໃນວັນທີ 16/10/2017 ທີ່ (ທຫລ); ❹ ກອງປະຊຸມທາບທາມເປີດກວ້າງກ່ຽວກັບຮ່າງດຳລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ທາງການເງິນໃນນະຄອນຫຼວງວຽງຈັນ.

- ທ່ານ ຜູ້ອຳນວຍການ ທຫລ ພ້ອມດ້ວຍຄະນະກະກຽມເດີນທາງໄປຢ້ຽມຢາມວຽກທາງລັດຖະການທີ່ ແຂວງຊຽງຂວາງ ແລະ ແຂວງຫົວພັນ;

- ສືບຕໍ່ກະກຽມລົງກວດກາທະນາຄານ ລາວ-ຝຣັ່ງ ຈຳກັດ ແລະ ທະນາຄານກຸງເທບ ຈຳກັດ (ມະຫາຊົນ) ສາຂານະຄອນຫຼວງວຽງຈັນ ປະຈຳປີ 2016 ຫາ ໄຕມາດ 2/2017.

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ